ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
PetroTrade
ຖະໜົນ: ກໍ່ແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 0045 /ປທລ/2020
ນະຄອນຫຼວງວຽງຈັນ, ວັນທີ: 29 ພຶດສະພາ 2020

ຮຽນ: ທ່ານ ຫົວໜ້າ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອໍານວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2019 ຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

- ອີງຕາມຂໍ້ຕົກລົງຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2019 ເມື່ອ ວັນທີ 29 ພຶດສະພາ 2020 ເວລາ 10:00 ໂມງ ທີ່ອາຄານຕະຫຼາດຫຼັກຊັບລາວ, ຫ້ອງປະຊຸມໃຫຍ່ຊັ້ນ 8, ບ້ານ ໂພນທັນ , ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນ ແລະ ຜູ້ຮັບມອບສິດເຂົ້າຮ່ວມປະຊຸມທັງໝົດ 19 ທ່ານ, ຖືຮຸ້ນລວມ 198,827,701 ຮຸ້ນ, ຄິດເປັນ 84.61% ຂອງຈໍານວນຮຸ້ນທັງໝົດທີ່ຈໍາໜ່າຍແລ້ວຂອງບໍລິສັດ ໂດຍ ທີ່ປະຊຸມໄດ້ມີມະຕິດັ່ງນີ້:

1. **ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2018**
   ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:
   - ເຫັນດີ 198,823,701 ສຽງ ຄິດເປັນ 100 %;
   - ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
   - ລວມ 198,823,701 ສຽງ ຄິດເປັນ 100 %.

2. **ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດໍາເນີນທຸລະກິດ ປະຈໍາປີ 2019 ແລະ ເອກະສານ ລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈໍາປີ 2019**
   ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:
   - ເຫັນດີ 198,823,701 ສຽງ ຄິດເປັນ 100 %;
   - ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
   - ລວມ 198,823,701 ສຽງ ຄິດເປັນ 100 %.

3. ພິຈາລະນາບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2019

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,822,701 ສຽງ ຄິດເປັນ 99.99749 %;
- ບໍ່ເຫັນດີ 5,000 ສຽງ ຄິດເປັນ 0.00251 %;
- ລວມ 198,827,701 ສຽງ ຄິດເປັນ 100 %.

4. ພິຈາລະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,827,701 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,827,701 ສຽງ ຄິດເປັນ 100 %.

5. ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄົນ ບໍລິສັດ Price Waterhouse Coopers (Lao) Sole Co., Ltd. (PWC) ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2020 ຢູ່ລະຫວ່າງ 34,000-37,000 ໂດລາສະຫະລັດ

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198,827,701 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198,827,701 ສຽງ ຄິດເປັນ 100 %.

ໃນກອງປະຊຸມສາມັນຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາເພີ່ມເຕີມ, ປະທານສະພາບໍລິຫານ ຈຶ່ງກ່າວປິດກອງປະຊຸມ ໃນເວລາ 11:40 ໂມງ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານບັນດາທ່ານເພື່ອຮັບຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານກອງປະຊຸມ.

ຈັນທະດອນ ເມກສະຫວັນ

Chanthadom MEKSAVANH